SWIS-H
STATEWIDE INFANT
SCREENING - HEARING



# ເປັນຫຍັງລູກຂ້ອຍຈຶ່ງຕ້ອງມີການກວດການຟັງສຽງຊ້ຳອີກຄັ້ງນຶ່ງ?

ເດັກນ້ອຍຫຼາຍຄົນຕ້ອງມີການກວດການຟັງສຽງຊ້ຳເປັນຄັ້ງທີສອງ.

ມັນບໍ່ຈຳເປັນຕ້ອງໝາຍຄວາມວ່າລູກທ່ານໄດ້ສູນເສັຍການໄດ້ຍິນ. ມັນອາດ ຈະມີເຫດຜົນອື່ນໆທີ່ຕ້ອງມີການກວດຄັ້ງທີສອງນີ້.

ເຫດຜົນອັນປົກກະຕິສ່ວນໃຫຍ່ທີ່ຕ້ອງມີການ ກວດຊ້ຳນີ້ຄື ມີນ້ຳ ຫຼື ການອຸດຕັນຢູ່ໃນຫູຂອງລູກທ່ານຫຼັງຈາກການຄອດ.

ໃນຫຼາຍກໍຣະນີ ການກວດການຟັງສຽງຊ້ຳ ອີກຄັ້ງນຶ່ງນີ້ຈະເຮັດໃຫ້ກ່ອນທີ່ທ່ານແລະລູກຈະອອກຈາກໂຮງໝໍ.

ຖ້າວ່າບໍ່ສາມາດກວດໄດ້ໃນຂະນະທີ່ທ່ານ ແລະ ລູກທ່ານຍັງຢູ່ໂຮງໝໍ ທ່ານກໍຈະຖືກສເນີໃຫ້ມີການກວດການຟັງສຽງຄັ້ງທີສອງສຳລັບລູກທ່ານແບບເປັນຄົນປ່ວຍນອກ ຫຼື ທີ່ສູນຊຸມຊົນທ້ອງຖິ່ນ ໃນທັນທີຫຼັງຈາກທີ່ອອກຈາກໂຮງໝໍ.

ຜູ້ທີ່ເອົາເຈັ້ຍຂໍ້ມູນນີ້ໃຫ້ທ່ານຈະແນະນຳວ່າຍາມໃດທີ່ການກວດການຟັງສຽງຈະມີຂຶ້ນ ແລະ ຢູ່ໃສ.

## ຜົນຮັບ

ໃນທັນທີທີ່ການກວດການຟັງສຽງແລ້ວເສັດ ຜົນຮັບກໍຈະຖືກອະທິບາຍໃຫ້ທ່ານຟັງແລະຈະຖືກບັນທຶກໄວ້ຢູ່ໃນປຶ້ມບັນທຶກ ສຸຂະພາບສ່ວນຕົວສີຟ້າ (Blue Book) ຂອງລູກທ່ານ.

ຖ້າການກວດການຟັງສຽງຊ້ຳອີກຄັ້ງນຶ່ງບໍ່ສະແດງໃຫ້ເຫັນຜົນຊັດແຈ້ງ ລູກທ່ານກໍຈະຖືກແນະນຳສົ່ງໄປຫາຜູ້ຊ່ຽວຊານດ້ານ ການຟັງສຽງ ເພື່ອຮັບການວິໄຈປະເມີນເບິ່ງການໄດ້ຍິນສຽງ.

ມັນເປັນສິ່ງສຳຄັນທີ່ຕ້ອງຊອກຮູ້ໃຫ້ໄວເທົ່າທີ່ໄວໄດ້ວ່າລູກທ່ານໄດ້ຍິນດີປານໃດ ເພື່ອວ່າທ່ານແລະລູກທ່ານສາມາດໄດ້ຮັບຄຳແນະນຳທີ່ຖືກຕ້ອງພ້ອມທັງການອູ້ມຊູ.

**ເພື່ອເອົາຂໍ້ມູນເພີ້ມຕື່ມ**
**ກະຣຸນາເຂົ້າຢ້ຽມເບິ່ງເວັບໄຊຕ໌ທີ່ຢູ່ຂ້າງລຸ່ມນີ້:**

http://www.health.nsw.gov.au/kids-families

ການຕິດຕໍ່ໃນທ້ອງຖິ່ນ/ຣາຍລະອຽດຂອງການນັດໝາຍ

ເພື່ອຊອກເອົາຄຳແນະນຳດ້ານສຸຂພາບ ຈົ່ງ ຕິດຕໍ່ *healthdirect Australia*
http://www.healthdirect.gov.au/
**1800 022 222**

Lao - Why does my baby need a repeat hearing screen?

NSW GOVERNMENT | Health

© NSW Health September 2016 SHPN (NKF) 150208